**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2821 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 11 ພະຈິກ 2025

# ແຈ້ງການ

**ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;**
**- ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ, ເຂດເສດຖະກິດພິເສດ;**
**- ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ.**
**ເລື່ອງ: ບັນຊີປະເພດທຸລະກິດ ທີ່ເກືອດຫ້າມດຳເນີນທຸລະກິດ.**

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງວິສາຫະກິດ ສະບັບເລກທີ 0111/ກຄວ, ລົງວັນທີ 28 ກໍລະກົດ 2025.

ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ກ່ຽວກັບບັນຊີປະເພດທຸລະກິດ ທີ່ເກືອດຫ້າມດຳເນີນທຸລະກິດ ດັ່ງນີ້:

1. ບັນຊີປະເພດທຸລະກິດ ທີ່ເກືອດຫ້າມດຳເນີນທຸລະກິດ ແມ່ນປະເພດທຸລະກິດ ທີ່ບໍ່ອະນຸຍາດໃຫ້ສ້າງຕັ້ງ ແລະ ເຄື່ອນໄຫວດຳເນີນທຸລະກິດ ຢູ່ ສປປ ລາວ;
2. ການຂຶ້ນທະບຽນວິສາຫະກິດ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ ໃຫ້ບຸກຄົນ ຫຼື ນິຕິບຸກຄົນທີ່ບໍ່ສອດຄ່ອງຕາມແຈ້ງການສະບັບນີ້ ລ້ວນແລ້ວແຕ່ເປັນໂມຄະ, ຜູ້ທີ່ລະເມີດຕ້ອງຮັບຜິດຊອບຕາມກົດໝາຍ;
3. ບັນຊີປະເພດທຸລະກິດ ທີ່ເກືອດຫ້າມດຳເນີນທຸລະກິດ ໄດ້ຄັດຕິດມາພ້ອມນີ້;
4. ການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຖ້າຫາກຂະແໜງການກ່ຽວຂ້ອງ ມີຈຸດປະສົງ ເພີ່ມ ຫຼື ຫຼຸດບັນຊີປະເພດທຸລະກິດ ທີ່ເກືອດຫ້າມດຳເນີນທຸລະກິດ ໃຫ້ສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອປັບປຸງປ່ຽນແປງ ໃນແຕ່ລະໄລຍະ;
5. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1592/ອຄ.ຄທວ, ລົງວັນທີ 26 ສິງຫາ 2013;
6. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ລັດຖະມົນຕີ**

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດຖະມົນຕີ

ມະໄລທອງ ກົມມະສິດ

# ບັນຊີປະເພດທຸລະກິດ ທີ່ເກືອດຫ້າມດຳເນີນທຸລະກິດ

ບັນຊີປະເພດທຸລະກິດ ທີ່ເກືອດຫ້າມດຳເນີນທຸລະກິດ ມີດັ່ງນີ້:

| ລ/ດ | LSIC | ປະເພດທຸລະກິດ ເກືອດຫ້າມດຳເນີນທຸລະກິດ | ນິຕິກຳ | ຂະແໜງການ ຮັບຜິດຊອບ |
|---|---|---|---|---|
| 1 | 20119 | ສານເຄມີອັນຕະລາຍ ປະເພດທີ 1 | – ກົດໝາຍ ວ່າດ້ວຍການຄຸ້ມຄອງເຄມີ ສະບັບເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016;<br>– ດຳລັດ ວ່າດ້ວຍການນຳເຂົ້າ ແລະ ສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 06 ເມສາ 2011;<br>– ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງແຮ່ທາດ ແລະ ທາດເຄມີອຸດສາຫະກຳ ສະບັບເລກທີ 1041/ອຄ. ກອຫ, ລົງວັນທີ 28 ພຶດສະພາ 2012. | ກະຊວງອຸດສາຫະກຳ ແລະ ການຄ້າ |
| 2 | 07210 | ແຮ່ທາດກຳມັນຕະພາບລັງສີ ທຸກຊະນິດ | – ກົດໝາຍ ວ່າດ້ວຍແຮ່ທາດ ສະບັບເລກທີ 02/ສພຊ, ລົງວັນທີ 20 ທັນວາ 2011;<br>– ດຳລັດ ວ່າດ້ວຍການສົ່ງອອກຜະລິດຕະພັນແຮ່ທາດ ສະບັບເລກທີ 90/ນຍ, ລົງວັນທີ 09 ມິຖຸນາ 2008; | ກະຊວງອຸດສາຫະກຳ ແລະ ການຄ້າ |
| 3 | 25200 | ລູກກະສູນ ຫຼື ອາວຸດທຸກຊະນິດ (ຍົກເວັ້ນທາດລະເບີດເພື່ອຮັບໃຊ້ອຸດສາຫະກຳແຕ່ຕ້ອງໄດ້ຮັບອະນຸ ຍາດສະເພາະ), ພາຫະນະຮັບໃຊ້ສົງຄາມ. | – ປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017;<br>– ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທາດລະເບີດ ຢູ່ ສປປ ລາວ, ສະບັບເລກທີ 39/ນຍ, ລົງວັນທີ 12 ກໍລະກົດ 2001; | ກະຊວງປ້ອງກັນປະເທດ |
| 4 | 01289 | ຝິ່ນ, ເມັດຝິ່ນ, ດອກຝິ່ນ, ແກ່ນຝິ່ນ, ດອກຝິ່ນແຫ້ງ, ຝິ່ນສຳເລັດຮູບ, ອື່ນໆທີ່ເຮັດຈາກຝິ່ນ, ໃບໂກໂກ້, ກັນຊາໃນຮູບແບບຕ່າງໆ, ໂຄເຄນ ແລະ ອະນຸພັນຂອງມັນ; | – ປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017;<br>– ກົດໝາຍ ວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007;<br>– ດຳລັດ ຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍຢາເສບຕິດ, ສະບັບເລກທີ 076/ນຍ, ລົງວັນທີ 20 ກຸມພາ 2009. | ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງສາທາລະນະສຸກ |

| | | | | |
|---|---|---|---|---|
| 5 | 20221 | ເຈ້ຍພິມທະນະບັດ, ນ້ຳມຶກພິມທະນະບັດ, ເຄື່ອງຈັກພິມທະນະບັດ, ເບົ້າຫຼໍ່ ແລະ ເຄື່ອງຈັກຫຼອມເງິນຫຼຽນ | – ກົດໝາຍ ວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 66/ສພຊ, ລົງວັນທີ 11 ທັນວາ 2024. | ທະນາຄານແຫ່ງ ສປປ ລາວ |
| 6 | | ປະເພດທຸລະກິດເກືອດຫ້າມຕ່າງໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ. | – ບັນດາກົດໝາຍ ແລະ ລະບຽບການ ຂອງຂະແໜງການກ່ຽວຂ້ອງ; | ຂະແໜງການກ່ຽວຂ້ອງ |

**ໝາຍເຫດ:** ບັນຊີປະເພດທຸລະກິດ ທີ່ເກືອດຫ້າມດຳເນີນທຸລະກິດ ແມ່ນໄດ້ຄົ້ນຄວ້າ ແລະ ສັງລວມມາຈາກຄຳສະເໜີຂອງບັນດາຂະແໜງການທີ່ກ່ຽວຂ້ອງ, ປ່ຽນແທນ ແລະ ລົບລ້າງ ບັນຊີ ຂໍ ຕາມແຈ້ງການ ສະບັບເລກທີ 1592/ອຄ.ທຄວ, ລົງວັນທີ 26 ສິງຫາ 2013.